NSW GOVERNMENT

# What do I need to know if my child is expelled?

Parent/carer information

# ຂ້ອຍຕ້ອງຮູ້ຫຍັງແດ່ຖ້າລູກຂອງຂ້ອຍຖືກໄລ່ອອກໂຮງຮຽນ?

## ຂໍ້ມູນສຳລັບພໍ່ແມ່/ຜູ້ດູແລ

### ການໄລ່ອອກໂຮງຮຽນ ແມ່ນຫຍັງ?

ການໄລ່ອອກໂຮງຮຽນແມ່ນເວລາທີ່ທ່ານຄູໃຫຍ່ ແລະຜູ້ອຳນວຍການ, ຜູ້ນຳດ້ານການສຶກສາບອກນັກຮຽນວ່າພວກເຂົາຕ້ອງອອກຈາກໂຮງຮຽນແລະບໍ່ກັບມາຄືນ. ການໄລ່ອອກໂຮງຮຽນແມ່ນເປັນເລື່ອງຮ້າຍແຮງ. ໂຮງຮຽນຂອງທ່ານຄວນພະຍາຍາມທຸກດ້ານເພື່ອສະໜັບສະໜຸນລູກຂອງທ່ານກ່ອນທີ່ຈະມີການຕັດສິນໃຈໄລ່ອອກ.

ທ່ານຄູໃຫຍ່ສາມາດໄລ່ນັກຮຽນອອກດ້ວຍເຫດຜົນສອງຢ່າງ:

- ນັກຮຽນສະແດງຄວາມປະພຶດອັນເປັນທີ່ກັງວົນຢ່າງຮ້າຍແຮງ ແລະແຜນການຈັດການກັບຄວາມປະພຶດຂອງພວກເຂົາບໍ່ໄດ້ຜົນ.
- ນັກຮຽນມີອາຍຸ 17 ປີ ຫຼື ຫຼາຍກວ່າ ແລະ ບໍ່ໄດ້ມີສ່ວນຮ່ວມໃນການຮຽນ.

ທ່ານຄູໃຫຍ່ຈະຄິດກ່ຽວກັບວິທີທີ່ໂຮງຮຽນໄດ້ສະ  ໜັບສະໜຸນການຮຽນຂອງລູກທ່ານໂດຍຄຳນຶງເຖິງຄວາມຕ້ອງການແລະຄວາມເປັນມາຂອງພວກເຂົາກ່ອນທີ່ຈະຕັດສິນໃຈໄລ່ອອກ.

ກ່ອນທີ່ຈະມີການໄລ່ອອກໂຮງຮຽນເກີດຂຶ້ນ, ທ່ານຄູໃຫຍ່ຈະຕິດຕໍ່ຫາທ່ານເພື່ອແຈ້ງໃຫ້ທ່ານຮູ້ວ່າພວກເຂົາພວມຄິດວ່າຈະໄລ່ລູກຂອງທ່ານອອກຈາກໂຮງຮຽນ.ພວກເຂົາຈະອອກແຈ້ງການເປັນລາຍລັກອັກສອນກ່ຽວກັບການໄລ່ອອກທີ່ອາດຈະເກີດຂຶ້ນ ແລະ ເຊີນທ່ານ ແລະລູກຂອງທ່ານເຂົ້າຮ່ວມກອງປະຊຸມເພື່ອບອກເຫດຜົນ ແລະສົນທະນາກ່ຽວກັບສິ່ງທີ່ຈະເກີດຂຶ້ນຖ້າພວກເຂົາໄລ່ລູກຂອງທ່ານອອກ. ທ່ານສາມາດເອົາຜູ້ສະໜັບສະໜູນມາກັບທ່ານເພື່ອເຂົ້າຮ່ວມກອງປະຊຸມນີ້. ຜູ້ສະໜັບສະໜູນສາມາດສະໜັບສະໜູນທ່ານແລະ / ຫຼືລູກຂອງທ່ານດ້ວຍການຊ່ວຍເຫຼືອດ້ານການປະຕິບັດແລະ / ຫຼືຄວາມຮູ້ສຶກ.

ຫຼັງຈາກວັນທີຂອງການແຈ້ງການເປັນລາຍລັກອັກສອນ, ທ່ານຈະມີເວລາເຈັດມື້ຮຽນເພື່ອຕອບກັບໂຮງຮຽນດ້ວຍເຫດຜົນວ່າເປັນຫຍັງລູກຂອງທ່ານບໍ່ຄວນຖືກໄລ່ອອກ. ທ່ານຄູໃຫຍ່ຈະໃຊ້ຄຳຕອບນີ້ເປັນສ່ວນໜຶ່ງຂອງຂະບວນການການຕັດສິນໃຈ.

### ຈະເກີດຫຍັງຂຶ້ນຖ້າລູກຂອງຂ້ອຍຖືກໄລ່ອອກໂຮງຮຽນ?

ທ່ານຄູໃຫຍ່ ແລະ ຜູ້ອຳນວຍການ, ຜູ້ນຳດ້ານການສຶກສາ ຈະຕັດສິນໃຈຮ່ວມກັນຖ້າຫາກວ່ານັກຮຽນຈະຖືກໄລ່ອອກ.  ພາຍໃນ 24 ຊົ່ວໂມງຂອງການຕັດສິນໃຈໄລ່ນັກຮຽນອອກ, ທ່ານຄູໃຫຍ່ຕ້ອງບອກນັກຮຽນ ແລະ ພໍ່ແມ່ ຫຼື ຜູ້ດູແລຂອງພວກເຂົາ ແລະ ແຈ້ງໃຫ້ກະຊວງສຶກສາ ຣັດ NSW ຊາບ.

ຖ້າລູກຂອງທ່ານມີອາຍຸຕ່ຳກວ່າ 17 ປີ ແລະຖືກໄລ່ອອກຍ້ອນຄວາມປະພຶດຂອງພວກເຂົາ, ທ່ານຄູໃຫຍ່ຈະຕ້ອງຊອກຫາໂຮງຮຽນ ໃໝ່ ຫຼື ສະຖານທີ່ອື່ນເພື່ອສືບຕໍ່ການຮຽນ ພາຍໃນ 15 ມື້ຮຽນ.

ຖ້າລູກຂອງທ່ານມີອາຍຸ 17 ປີ ຫຼື ຫຼາຍກວ່າ ທ່ານແລະລູກຂອງທ່ານຄວນຊອກຫາທາງເລືອກອື່ນເພື່ອສືບຕໍ່ການຮຽນ ຫຼື ຫັນປ່ຽນໄປຫາວຽກງານ.

### ຂ້ອຍສາມາດໄດ້ຮັບຂໍ້ມູນຫຍັງແດ່ຈາກໂຮງຮຽນ?

ທ່ານສາມາດສອບຖາມເອົາຂໍ້ມູນເພີ້ມເຕີມ ກ່ຽວກັບສິ່ງທີ່ເກີດຂຶ້ນ ແລະເຫດຜົນຈາກໂຮງຮຽນໄດ້. ໂຮງຮຽນຄວນອະທິບາຍໃຫ້ທ່ານຮູ້ເຫດຜົນຢູ່ເບື້ອງຫຼັງການຕັດສິນໃຈໃດໆ ການດຳເນີນການທີ່ຈະເກີດຂຶ້ນ ແລະຈະເຮັດແນວໃດຫາກທ່ານມີບັນຫາ.

### ຂ້ອຍສາມາດຍື່ນອຸທອນການໄລ່ອອກໄດ້ບໍ?

ໄດ້, ຖ້າທ່ານເຊື່ອວ່າທ່ານຄູໃຫຍ່ແລະຜູ້ອຳນວຍການ, ຜູ້ນຳດ້ານການສຶກສາ, ໄດ້ຕັດສິນໃຈແບບບໍ່ຍຸຕິທຳ ຫຼື ບໍ່ປະຕິບັດຕາມຂະບວນການທີ່ຖືກຕ້ອງ. ໃຫ້ອ້າງອີງເຖິງຊັບພະຍາກອນການອຸທອນ.

ມີຂໍ້ມູນກ່ຽວກັບ ການຮ້ອງຮຽນຕາງໜ້າ ສະໜັບສະໜູນລູກຂອງທ່ານ ໄວ້ໃຫ້, ເຊັ່ນດຽວກັນກັບ ກົດບັດຊຸມຊົນໂຮງຮຽນ ຂອງພວກເຮົາທີ່ອະທິບາຍວິທີການສື່ສານກັບໂຮງຮຽນກໍມີໃຫ້ອີກນຳ.

### ຂ້ອຍຈະຮ້ອງຮຽນໄດ້ແນວໃດ?

ຖ້າທ່ານມີຄວາມກັງວົນກ່ຽວກັບການໄລ່ອອກໂຮງ ຮຽນ, ການຕັດສິນໃຈທີ່ໄດ້ເຮັດ ຫຼື ການສະໜັບສະໜູນ, ກະລຸນາເບິ່ງເວັບໄຊທ໌ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການທຳການຮ້ອງຮຽນ.

### ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການຕິດຕໍ່ກັບໂຮງຮຽນ ແລະຕ້ອງການຄວາມຊ່ວຍເຫຼືອດ້ານພາສາອັງກິດ ກະລຸນາໂທຫາບໍລິການນາຍພາສາທາງໂທລະສັບ ເບີ 131 450, ບອກພວກເຂົາວ່າທ່ານຕ້ອງການພາສາໃດ ແລະຂໍໃຫ້ຜູ້ຮັບສາຍໂທຫາໂຮງຮຽນ. ຜູ້ໂຮງຮຽນ. ຜູ້ຮັບສາຍຈະຊອກຫານາຍພາສາຢູ່ໃນສາຍເພື່ອຊ່ວຍທ່ານໃນການສົນທະນາຂອງທ່ານ. ທ່ານຈະບໍ່ຖືກເກັບຄ່າ ທ່ານ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.